






ຮູບ 1 ລານສູນກາງວິທະຍາໄລ　　ຮູບ 2 ຫໍສະໝຸດຂອງວິທະຍາໄລ　　ຮູບ 3 ບຶງນ້ຳໃນວິທະຍາໄລ

## 1.ແນະນຳກ່ຽວກັບວິທະຍາໄລໂດຍຫຍໍ້

**ວິທະຍາໄລເຕັກນິກວິຊາຊີບ ແລະ ພົນລະເຮືອນ ສາງຊາ** (Changsha Social Work College) ສ້າງຕັ້ງຂຶ້ນໃນປີ 1984, ຕັ້ງຢູ່ເມືອງສາງຊາ ແຂວງຫູໜານ ບ້ານເກີດຂອງທ່ານ ໝາວເຈີ໋ຕຸງ, ແມ່ນວິທະຍາໄລເຕັກນິກວິຊາຊີບສາທິດແຫ່ງຊາດ ຊຸດທຳອິດຂອງຈີນ, ແມ່ນວິທະຍາໄລວິຊາຊີບຊັ້ນສູງທີ່ມີຄຸນລັກສະນະພິເສດແບບຈີນ, ແລະແມ່ນໜ່ວຍງານກໍ່ສ້າງ ແລະ ອອກແບບວິຊາການລະດັບຊາດ. ໃນຊຸມປີມໍ່ໆມານີ້, ວິທະຍາໄລໄດ້ຮັບລາງວັນກຽດຕິຍົດຫຼາຍຢ່າງເຊັ່ນ: ລາງວັນ “ໜ່ວຍງານຂັ້ນສູງແຫ່ງຊາດເພື່ອການສຶກສາວິຊາຊີບ” ແລະ “ລາງວັນແຫ່ງຊາດໃນການປະກອບສ່ວນດີເດັ່ນໃຫ້ແກ່ການສ້າງບຸກຄະລາກອນແຫ່ງຊາດ”. ວິທະຍາໄລແຫ່ງນີ້ ປະກອບມີຢູ່ 8 ຄະນະຫຼັກໆຄື: ຄະນະວິສະວະກຳຂໍ້ມູນຂ່າວສານອີເລັກໂທຣນິກ, ຄະນະທຸລະກິດການຄ້າ, ຄະນະຊອບແວ ແລະ ຄະນະລະດັບສອງອື່ນໆ, ມີ 44 ວິຊາດ້ວຍກັນຄື ວິຊາເຕັກໂນໂລຍີ Mechatronics, ວິຊາການຄ້າອີເລັກໂທຣນິກ, ເຕັກໂນໂລຢີຊອບແວ ແລະ ອື່ນໆ. ວິທະຍາໄລດັ່ງກ່າວແມ່ນວິທະຍາໄລເຕັກນິກວິຊາຊີບ ແຫ່ງທຳອິດໃນແຂວງຫູໜານ ທີ່ຮັບສະໝັກ ນັກສຶກສາຕ່າງປະເທດ ໃນຫຼັກສູດເຕັມເວລາຕາມມາດຕະຖານຫຼັກສູດປະລິນຍາຂອງ ສປ ຈີນ, ໃນປີ 2018 ໄດ້ເລີ່ມລົງທະບຽນຮັບນັກສຶກສາຕ່າງປະເທດຫຼັກສູດເຕັມເວລາຊຸດທຳອິດ, ເຊິ່ງໄດ້ຮັບນັກສຶກສາຕ່າງປະເທດທັງໝົດ 57 ຄົນ, ໃນນັ້ນ ນັກສຶກສາລາວແມ່ນມີ 18 ຄົນ.

## 2.ຜົນສຳເລັດການອົບຮົມສ້າງບຸກຄະລາກອນນັກສຶກສາຕ່າງປະເທດ (ກໍລະນີຂອງນັກສຶກສາລາວດີເດັ່ນ)

ລວມກັນແລ້ວມີນັກສຶກສາ ຈຳນວນ 30 ເທື່ອຄົນ ທີ່ໄດ້ຮັບລາງວັນ ແລະ ໃບຍ້ອງຍໍຂັ້ນແຂວງ ແລະຂຶ້ນໄປ, ໃນນັ້ນ ໄດ້ຮັບລາງວັນລະດັບປະເທດແມ່ນມີ 11 ເທື່ອຄົນ; ລາງວັນ ແລະ ໃບຍ້ອງຍໍຂັ້ນແຂວງ 19 ເທື່ອຄົນ. ໃນນັ້ນ, ກຸ່ມຄະນະ ທີ່ນັກສຶກສາລາວເຂົ້າຮ່ວມ ຊື່ ທ້າວ ALOUNKONE (DOUANGDALA ALOUNKONE) ກໍ່ໄດ້ຮັບລາງວັນ ທີໜຶ່ງໃນການແຂ່ງຂັນດ້ານຫົວຄິດປະດິດສ້າງສຳລັບນັກສຶກສາວິທະຍາໄລລະດັບຊາດຫົວຂໍ້ “ອິນເຕີເນັດ +” ປະຈຳປີ 2019 ແລະ ລາງວັນຫຼຽນຄຳ ສຳລັບການແຂ່ງຂັນ ຫົວຄິດປະດິດສ້າງ ດ້ານວິຊາຊີບແຫ່ງຊາດຈີນ, ໄດ້ພົບກັບ ທ່ານ ຊຸນສຸນຫຼານ (Sun Chunlan) ຮອງນາຍົກລັດຖະມົນຕີ ຫຼາຍໆຄັ້ງ. SORSOMPHON SANGTA ແລະ BOUSITONGSUE THIDAPHONE ໄດ້ເຂົ້າຮ່ວມ ການແຂ່ງຂັນອ່ານບົດຄວາມ “ກ່ຽວກັບເມືອງຈີນ” ຂອງແຂວງຫູໜານ ປະຈຳປີ 2020, ເຊິ່ງໄດ້ຮັບລາງວັນທີສອງຂັ້ນແຂວງ.



获奖证书

杨西炜、单慕霖、边小芳、邹虎、阿伦功：

你们的作品《智慧融自·中央热水节能管家——一个为中央热水系统省钱、省力、省心的能源监管平台》，在第五届中国"互联网+"大学生创新创业大赛中荣获 金奖

指导教师：全健、刘凯、邓凯锋

特发此证，以资鼓励。

主办单位：
教育部、中央统战部、中央网络安全和信息化委员会办公室、
国家发展和改革委员会、工业和信息化部、人力资源和社会保障部、
农业农村部、国家知识产权局、中国科学院、中国工程院、
国务院扶贫开发领导小组办公室、共青团中央、浙江省人民政府

中国"互联网+"大学生创新创业大赛组织委员会

证书编号：201930015

第三届中华职业教育创新创业大赛

获奖证书

参赛学校：长沙民政职业技术学院
参赛作品：智慧融自·中央热水节能管家
项目成员：杨西炜、边小芳、邹虎、阿伦功、单慕霖
指导教师：全健、刘凯
所获奖项：竞赛一等奖（高职组）

中华职业教育社
二〇一九年十一月

ຮູບ 4 ຮູບການໄດ້ຮັບທຶນການສຶກສາ ແລະ ໃບຍ້ອງຍໍຂອງ ທ້າວ ALOUNKONE ນັກສຶກສາລາວ




荣誉证书

长沙民政职业技术学院：

在2020年湖南省"诵读中国"经典诵读大赛中，你单位选送的诵读作品《水调歌头·明月几时有》，荣获留学生组二等奖。谭晓溪、杨娟、廖甜利荣获优秀指导教师奖。

参赛选手：SORSOMPHON SANGTA、BOUASI TONGSUE THI DAPHONE

湖南省语言文字工作委员会　湖南省教育厅
二〇二〇年十二月

ຮູບ 5 ຮູບວິດີໂອ ແລະ ໃບຍ້ອງຍໍ ການຮັບລາງວັນ ຈາກການເຂົ້າຮ່ວມການແຂ່ງຂັນ ອ່ານບົດຄວາມ “ກ່ຽວກັບເມືອງຈີນ”

## 3.ທຶນການສຶກສາ

- ທຶນການສຶກສາສໍາລັບນັກສຶກສາຕ່າງປະເທດຫຼັກສູດເຕັມເວລາແຂວງຫູໜານ: ມູນຄ່າຂອງທຶນການສຶກສາແມ່ນ 12000 ຢວນ/ຄົນ/ປີ
- ທຶນການສຶກສານັກສຶກສາດ້ານພາສາ ສໍາລັບບັນດາປະເທດລຽບຕາມ ຍຸດທະສາດ “ໜຶ່ງແລວ ໜຶ່ງເສັ້ນທາງ” ແຂວງຫູໜານ: ມູນຄ່າຂອງທຶນການສຶກສາແມ່ນ 15000 ຢວນ/ຄົນ/ປີ
- ທຶນການສຶກສານັກສຶກສາຕ່າງປະເທດລະດັບວິທະຍາໄລ: ມູນຄ່າຂອງທຶນການສຶກສາແມ່ນ 4000-7000 ຢວນ/ຄົນ/ປີ

ທຶນການສຶກສາຮັບຮອງເອົາລະບົບການສະໝັກ, ແລະການຄັດເລືອກແມ່ນອີງໃສ່ຂໍ້ກໍານົດ ການຄັດເລືອກຂອງທຶນການສຶກສາຕ່າງໆ.

## 4.ປະເພດການຮັບສະໝັກນັກສຶກສາ

(1)ນັກສຶກສາລະດັບປະລິນຍາ

ຖ້າເສັງຜ່ານ HSK ລະດັບ 4 ແມ່ນສາມາດສະໝັກຮຽນ 22 ວິຊາຫຼັກໆຄື ວິຊາເຕັກໂນໂລຢີ IOT, ເຕັກໂນໂລຢີ Mechatronics, ເຕັກໂນໂລຢີໄຟຟ້າອັດຕະໂນມັດ, ເຕັກໂນໂລຢີອຸດສາຫະກໍາຫຸ່ນຍົນ, ເຕັກໂນໂລຢີ computer network, ເຕັກໂນໂລຢີຊອບແວ, ການບັນຊີ, ບໍລິຫານຄຸ້ມຄອງຊັບພະຍາກອນມະນຸດ ແລະ ວິຊາອື່ນໆ, ລາຍລະອຽດແມ່ນເບິ່ງໃນເອກະສານຕິດຄັດ.

(2)ນັກສຶກສາຝຶກອົບຮົມ (ພາສາຈີນ)

ຖ້າເສັງບໍ່ຜ່ານ HSK ລະດັບ 4 ແມ່ນສາມາດສະໝັກຮຽນວິຊາພາສາຈີນຂອງວິທະຍາໄລພວກເຮົາ , ເຊິ່ງໃຊ້ເວລາຮຽນ 1 ປີ. ຫຼັງຈາກເສັງຜ່ານ HSK ລະດັບ 4 ແມ່ນຈະຖືກຊັບຊ້ອນເຂົ້າຮຽນວິຊາສະເພາະທີ່ເໝາະສົມ. ວິທະຍາໄລພວກເຮົາແມ່ນມີທີມງານຄູສອນພາສາຈີນທີ່ໄດ້ມາດຕະຖານ, ຄູທຸກໆຄົນແມ່ນມີ “ໃບຢັ້ງຢືນອາຈານສອນພາສາຈີນສະເພາະ”.

## 5.ການສຶກສາຕໍ່ ແລະ ວຽກເຮັດງານທໍາ

ການຍົກສູງລະດັບການສຶກສາ ທາງວິທະຍາໄລໄດ້ນໍາພານັກສຶກສາດີເດັ່ນ ທີ່ຈົບການສຶກສາມາສະໝັກເຂົ້າຮຽນ ໃນມະຫາວິທະຍາໄລທີ່ຢູ່ໃນແຂວງ ແລະ ມະຫາວິທະຍາໄລທີ່ຢູ່ນອກແຂວງ ເພື່ອຍົກສູງລະດັບການສຶກສາຕໍ່.

ຝຶກງານ ແລະ ວຽກເຮັດງານທໍາ: ທາງວິທະຍາໄລໄດ້ຊີ້ນໍາ ກ່ຽວກັບການຝຶກງານ ແລະ ວຽກເຮັດ

ງານທຳຢ່າງຈິງຈັງ, ເລືອກບ່ອນການຝຶກງານ ແລະ ບ່ອນເຮັດວຽກທີ່ມີຄຸນນະພາບໃຫ້.

**ເອກະສານຕິດຄັດ: ວິຊາຮຽນສຳລັບນັກສຶກສາຕ່າງປະເທດ**

| ຄະນະ | ລ/ດ | ວິຊາ |
|---|---|---|
| ຄະນະວິສະວະກຳຂໍ້ມູນຂ່າວສານອີເລັກໂທຣນິກ | 1 | ເຕັກໂນໂລຢີ IOT |
| | 2 | ເຕັກໂນໂລຢີ Mechatronics |
| | 3 | ເຕັກໂນໂລຢີໄຟຟ້າອັດຕະໂນມັດ |
| | 4 | ເຕັກໂນໂລຢີອຸດສາຫະກຳຫຸ່ນຍົນ |
| ຄະນະທຸລະກິດການຄ້າ | 5 | ການຄ້າອີເລັກໂທຣນິກ |
| | 6 | ການຕະຫຼາດ |
| | 7 | ຄຸ້ມຄອງການຂົນສົ່ງ |
| ຄະນະຊອບແວ | 8 | ເຕັກໂນໂລຢີຊອບແວ |
| | 9 | ເຕັກໂນໂລຢີ computer network |
| ຄະນະການແພດ | 10 | ບໍລິການແລະຄຸ້ມຄອງດູແລສຸຂະພາບອັດສະລິຍະ |
| | 11 | ເຕັກໂນໂລຢີການປິ່ນປົວຟື້ນຟູ |
| | 12 | ພະຍາບານ |
| ຄະນະພົນລະເຮືອນ ແລະ ວຽກງານສັງຄົມ | 13 | ການຄຸ້ມຄອງ ແລະ ການບໍລິການຊຸມຊົນ |
| | 14 | ເຕັກໂນໂລຢີທັນສະໄໝສຳລັບການຄຸ້ມຄອງງານສົບແລະພິທີຝັງສົບ |
| | 15 | ບໍລິການ ແລະ ຄຸ້ມຄອງການແຕ່ງງານ |
| | 16 | ບໍລິການ ແລະ ຄຸ້ມຄອຄອບຄົວແບບທັນສະໄໝ |
| ຄະນະສິນລະປະ | 17 | ອອກແບບສື່ສານຈາກຮູບພາບ |
| | 18 | ການສື່ສານ ແລະ ການວາງແຜນ |
| | 19 | ການອອກແບບສິລະປະສິ່ງແວດລ້ອມ |
| | 20 | ສິລະປະສື່ດິຈິຕອລ໌ |
| ຄະນະບໍລິຫານການເງິນ ແລະ ເສດຖະສາດ | 21 | ບໍລິຫານຄຸ້ມຄອງຊັບພະຍາກອນມະນຸດ |
| | 22 | ການບັນຊີ |